# ຂໍ້ຕົກລົງກ່ຽວກັບເງື່ອນໄຂ ແລະ ຂໍ້ກຳນົດ ໃນການສະໝັກເປັນສະມາຊິກຮັບຊຳລະ SACOMBANK QR PAY

## 1. ນິຍາມ:

**1.1 Sacombank QR Pay** (Sacombank Quick Response Pay) ແມ່ນບໍລິການທີ່ຮອງຮັບການຊຳລະບັດຜ່ານ QR Code. ເຈົ້າຂອງບັດຈະນຳໃຊ້ແອັບພິເຄຊັ່ນ (Application) 365P@y ທີ່ທາງ ຊາຄອມແບັງ ລາວ ສ້າງຂຶ້ນ ຫຼື ແອັບພິເຄຊັ່ນທີ່ຄ້າຍຄືຂອງທາງທະນາຄານອື່ນສ້າງຂຶ້ນ ເພື່ອສະແກນ QR Code ທີ່ ຮ້ານຄ້າສະມາຊິກໄດ້ສະໜອງໃຫ້ເຈົ້າຂອງບັດ, ຈາກນັ້ນຈະໄດ້ຮັບຂໍ້ມູນການຊຳລະທີ່ກ່ຽວຂ້ອງກັບສິນຄ້າ, ການບໍລິການຂອງ ຮ້ານຄ້າສະມາຊິກ ເພື່ອປ່ຽນແທນການນຳໃຊ້ເຄື່ອງຮັບຊຳລະດ້ວຍບັດຢູ່ຈຸດບໍລິການ (ຄື: ເຄື່ອງຮູດບັດ POS/mPOS). ປະເພດບັດທີ່ສາມາດຮອງຮັບໄດ້ນັ້ນແມ່ນ ຊາຄອມແບັງ ລາວ ແຈ້ງໃຫ້ແກ່ຮ້ານຄ້າສະມາຊິກຮັບຮູ້ໃນແຕ່ລະໄລຍະ.

**1.2 QR Code (Quick Response Code)** ແມ່ນປະເພດຂອງບ່າໂຄດ (Barcode) ທີ່ສາມາດອ່ານໄດ້ດ້ວຍຕົວອ່ານບ່າໂຄດ ຫຼື ໂທລະສັບມືຖືທີ່ສາມາດຖ່າຍຮູບ (ກ້ອງຖ່າຍຮູບ) ຜ່ານແອັບພິເຄຊັ່ນເພື່ອສະແກນບ່າໂຄດ.

**1.3 ຮ້ານຄ້າສະມາຊິກ:** ແມ່ນບຸກຄົນ/ອົງການຈັດຕັ້ງທີ່ຮັບຊຳລະຄ່າສິນຄ້າ, ບໍລິການຂອງລູກຄ້າດ້ວຍບັດ/ກະເປົາອີເລັກໂທຣນິກ.

**1.4 ທຸລະກຳຊຳລະ:** ລວມມີທຸລະກຳຊື້ສິນຄ້າ, ທຸລະກຳຊຳລະ Online, ທຸລະກຳຊຳລະຜ່ານກະເປົາອີເລັກໂທຣນິ.

## 2. ຂອບເຂດນຳໃຊ້

ເມື່ອ ຮ້ານຄ້າສະມາຊິກ ເຂົ້າຮ່ວມບໍລິການຂອງ Sacombank QR Pay ທີ່ທາງ ຊາຄອມແບັງ ລາວ ສະໜອງໃຫ້, ລູກຄ້າທີ່ຊື້ສິນຄ້າ, ນຳໃຊ້ບໍລິການຂອງຮ້ານຄ້າສະມາຊິກສາມາດຊຳລະເງິນຊື້ສິນຄ້າ, ນຳໃຊ້ບໍລິການຜ່ານ Sacombank QR Pay ສຳລັບບັນດາປະເພດບັດ/ກະເປົາອີເລັກໂທຣນິກ ທີ່ທາງ ຊາຄອມແບັງ ລາວ ກຳນົດໃນແຕ່ລະໄລຍະ.

## 3. ສິດ ແລະ ຄວາມຮັບຜິດຊອບລວມ

**3.1** ແຕ່ລະຝ່າຍສັນຍາວ່າຈະຮັບຜິດຊອບຕໍ່ກົດໝາຍກ່ຽວກັບການດຳເນີນທຸລະກິດຂອງຕົນ.

**3.2** ແຕ່ລະຝ່າຍສັນຍາວ່າຈະບໍ່ປະຕິບັດບັນດາທຸລະກຳທີ່ຖືກຫ້າມ ຫຼື ກ່ຽວຂ້ອງເຖິງບັນດາທຸລະກຳທີ່ເຫັນວ່າ ເປັນທຸລະກຳທີ່ຖືກຫ້າມຕາມລະບຽບກົດໝາຍຂອງ ສປປ ລາວ, ກົດລະບຽບພາຍໃນຂອງ ຊາຄອມແບັງ ລາວ ແລະ ຕາມກົດລະບຽບຂອງອົງການຈັດຕັ້ງບັດສາກົນ/ ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ລວມມີແຕ່ບໍ່ຈຳກັດ ການລະເມີດລິຂະສິດ, ການໂຄສະນາ ຫຼື ໃຫ້ເຊົ່າໂຄສະນາບັນດາຜະລິດຕະພັນທີ່ກ່ຽວຂ້ອງກັບຢາ, ການຕະຫຼາດຫຼອກລວງ, ຢາກະຕຸ້ນ, ສານເສບຕິດ, ອາວຸດ, ສິນຄ້າຕ້ອງຫ້າມ, ການພະນັນ, ສິ່ງລາມົກ, ເປີດເຜີຍຂໍ້ມູນລູກຄ້າ, ທຸລະກຳທີ່ກ່ຽວຂ້ອງກັບການຟອກເງິນ, ການລະເມີດສິດທິມະນຸດ.

**3.3** ບໍ່ເປີດເຜີຍຂໍ້ມູນກັບບຸກຄົນທີ 3 ລວມມີແຕ່ບໍ່ຈຳກັດ ບັນດາຂໍ້ມູນທີ່ກ່ຽວຂ້ອງກັບສັນຍາສະບັບນີ້, ບັນດາຂໍ້ມູນທີ່ກ່ຽວຂ້ອງກັບລູກຄ້າ, ບັດ ,ບັນຊີ, ທຸລະກຳບັດ, ກະເປົາອີເລັກໂທຣນິກ ຍົກເວັ້ນກໍລະນີທີ່ກົດໝາຍກຳນົດ ຫຼື ຈາກອົງການຈັດຕັ້ງລັດທີ່ມີສິດອຳນາດ. ໃນກໍລະນີນີ້, ແຕ່ລະຝ່າຍໃຫ້ສັນຍາວ່າຈະແຈ້ງການເປັນລາຍລັກອັກ ສອນໃຫ້ອີກຝ່າຍຮັບຮູ້ ແລະ ປະຕິບັດບັນດາມາດຕະການແນໃສ່ການຈຳກັດການເປີດເຜີຍຂໍ້ມູນຂ້າງເທິງ ເຊິ່ງສ້າງຄວາມເສຍຫາຍໃຫ້ແກ່ ຊາຄອມແບັງ ລາວ, ຮ້ານຄ້າສະມາຊິກ, ລູກຄ້າ ຫຼື ບຸກຄົນທີ 3.

**3.4** ແຕ່ລະຝ່າຍສັນຍາວ່າຈະປະຕິບັດໃຫ້ຖືກຕ້ອງຕາມລະບຽບ, ນະໂຍບາຍວ່າດ້ວຍການຮັບຊຳລະດ້ວຍບັດ/ກະເປົາອີເລັກໂທຣນິກ ຕາມລະບຽບກົດໝາຍຂອງ ສປປ ລາວ, ບັນດາອົງການຈັດຕັ້ງບັດສາກົນ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ແລະ ບັນດາກົດລະບຽບ ຫຼື ແຈ້ງການອື່ນຂອງ ຊາຄອມແບັງ ລາວ ທີ່ກ່ຽວຂ້ອງກັບການບໍລິການນີ້.

## 4. ສິດ ແລະ ພັນທະຂອງ ຊາຄອມແບັງ ລາວ

**4.1. ສິດ**

**a)** ກວດສອບຄວາມຖືກຕ້ອງຂອງບັນດາທຸລະກຳຊຳລະ ທີ່ໄດ້ດຳເນີນຢູ່ກັບຮ້ານຄ້າສະມາຊິກກ່ອນທີ່ຈະດຳເນີນການຊຳລະລ່ວງໜ້າໃຫ້ຮ້ານຄ້າສະມາຊິກ.

**b)** ຮຽກຮ້ອງໃຫ້ຮ້ານຄ້າສະມາຊິກສະໜອງບັນດາຂໍ້ມູນທີ່ຈຳເປັນ, ກ່ຽວຂ້ອງເຖິງບັນດທຸລະກຳບັດ/ກະເປົາອີເລັກໂທຣນິກ ທີ່ລູກຄ້າໄດ້ເຮັດທຸລະກຳກັບຮ້ານຄ້າສະມາຊິກ.

**c)** ຮຽກຮ້ອງໃຫ້ຮ້ານຄ້າສະມາຊິກສົ່ງຄືນຈຳນວນເງິນທີ່ທາງ ຊາຄອມແບັງ ລາວ ໄດ້ຊຳລະລ່ວງໜ້າໃຫ້ຮ້ານຄ້າສະມາ ຊິກເມື່ອເກີດເຫດການໃດໜຶ່ງທີ່ລະບຸໄວ້ໃນມາດຕາ 7 - ການສົ່ງເງິນຄືນຕາມການຕົກລົງໃນສັນຍາສະບັບນີ້.

**d)** ໄດ້ອັດຕາຄ່າທຳນຽມຊຳລະຜ່ານ, ບັນດາຄ່າທຳນຽມອື່ນຕາມກົດລະບຽບຂອງ ຊາຄອມແບັງ ລາວ.

**e)** ຊາຄອມແບັງ ລາວ ມີສິດໂອນ ຫຼື ມອບສິດ ແລະ ພັນທະຂອງຕົນສ່ວນໃດສ່ວນໜຶ່ງ ຫຼື ທັງໝົດຕາມທີ່ລະບຸໃນສັນຍາສະບັບນີ້ໃຫ້ບຸກຄົນທີ 3. ໃນເວລານັ້ນ, ຮ້ານຄ້າສະມາຊິກຈະຕ້ອງປະຕິບັດ ຫຼື ຮອງຮັບທຸກເອກະສານຂອງ ຊາຄອມແບັງ ລາວ, ເພື່ອເຮັດໃຫ້ການໂອນ ຫຼື ສົ່ງມອບສຳເລັດຕາມການຮຽກຮ້ອງຂອງ ຊາຄອມແບັງ ລາວ.

**f)** ບໍ່ຮັບຜິດຊອບກ່ຽວກັບຂໍ້ຂັດແຍ່ງ ແລະ ການສະເໜີໃດໆທີ່ກ່ຽວຂ້ອງເຖິງສິນຄ້າ, ການບໍລິການ; ຄຸນນະພາບຂອງສິນຄ້າ, ການບໍລິການ ຫຼື ການສະໜອງ ແລະ ນຳໃຊ້ບໍລິການລະຫວ່າງ ລູກຄ້າ ແລະ ຮ້ານຄ້າສະມາຊິກ.

**g)** ບັນດາສິດອື່ນໆຕາມລະບຽບກົດໝາຍ.

**4.2. ພັນທະ**

**a)** ຮັບຜິດຊອບຊຳລະລ່ວງໜ້າຈຳນວນເງິນຊື້ສິນຄ້າ, ນຳໃຊ້ບໍລິການທີ່ລູກຄ້າໄດ້ຊຳລະຜ່ານ QR Code ໃຫ້ແກ່ ຮ້ານຄ້າສະມາຊິກ.

**b)** ສະໜອງໃຫ້ຮ້ານຄ້າສະມາຊິກທີ່ສະໝັກເປັນສະມາຊິກ QR Merchant ມີສິດ ແລະ ເຄື່ອງມືໃນການເຂົ້າເຖິງລະບົບການລາຍງານອອນໄລນ໌ (Merchant Administration) ເພື່ອຊອກຫາຂໍ້ມູນທຸລະກຳການຈ່າຍເງິນທີ່ລູກຄ້າໄດ້ເຮັດຜ່ານ Sacombank QR Pay ເພື່ອໃຊ້ໃນການປຽບທຽບຂໍ້ມູນລະຫວ່າງແຕ່ລະຝ່າຍ.

**c)** ບັນດາພັນທະອື່ນໆຕາມລະບຽບກົດໝາຍ.

## 5. ສິດ ແລະ ພັນທະຂອງຮ້ານຄ້າສະມາຊິກ

**5.1. ສິດ**

**a)** ຮອງຮັບທຸກທຸລະກຳຊຳລະເງິນຄ່າສິນຄ້າ, ຄ່າບໍລິການດ້ວຍບັດ/ກະເປົາອີເລັກໂທຣນິກ. ປະເພດບັດ/ ກະເປົາອີເລັກໂທຣນິກ ທີ່ສາມາດຮອງຮັບການຊຳລະໄດ້ນັ້ນ ແມ່ນ ຊາຄອມແບັງ ລາວ ຈະແຈ້ງການໃນແຕ່ລະໄລຍະ.

**b)** ປະຕິເສດການຊຳລະດ້ວຍບັດເມື່ອບັດໝົດອາຍຸການນຳໃຊ້, ບັດປອມ ຫຼື ມີສ່ວນກ່ຽວຂ້ອງເຖິງການເຮັດທຸລະກຳປອມ, ບັດທີ່ຖືກເຈົ້າຂອງບັດແຈ້ງເສຍ ຫຼື ບໍ່ໄດ້ມາດຕະຖານຕາມກົດລະບຽບຂອງທະນາຄານ ຫຼື ອົງການຈັດຕັ້ງບັດສາກົນ ປະຕິເສດການຊຳລະບັນດາທຸລະກຳຊຳລະທີ່ໜ້າສົງໄສ ແລະ ມີລັກສະນະເປັນການຟອກເງິນ.

**c)** ຊາຄອມແບັງ ລາວ ຈະຊຳລະລ່ວງໜ້າ (ແຈ້ງມີເຂົ້າບັນຊີຊຳລະຂອງຮ້ານຄ້າສະມາຊິກ) ສຳລັບບັນດາທຸລະກຳບັດທີ່ສຳເລັດໂດຍໄດ້ຮອງຮັບຈາກອົງກອນອອກບັດ ແລະ ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ.

**d)** ຮ້ານຄ້າສະມາຊິກ ມີສິດສະເໜີໃຫ້ ຊາຄອມແບັງ ລາວ ກວດສອບ, ຮຽກຮ້ອງ ສຳລັບບັນດາທຸລະກຳທີ່ຜິດພາດ ຫຼື ສົງໄສວ່າມີຄວາມຜິດພາດ ແລະ ສະເໜີໃຫ້ຊົດເຊີຍຕາມລະບຽບກົດໝາຍ.

**e)** ບັນດາສິດອື່ນໆຕາມລະບຽບກົດໝາຍ.

**5.2. ພັນທະ**

**a)** ຮັບຜິດຊອບສະໜອງຂໍ້ມູນໃຫ້ຄົບຖ້ວນ, ຖືກຕ້ອງຊັດເຈນຕາມຂໍ້ມູນເອກະສານສະໝັກເປັນສະມາຊິກ, ພ້ອມທັງແຈ້ງເມື່ອມີການປ່ຽນແປງຂໍ້ມູນທີ່ເຄີຍສະໜອງໃຫ້ ຊາຄອມແບັງ ລາວ ຫຼື ເມື່ອ ຊາຄອມແບັງ ລາວ ຕ້ອງການໃນໄລຍະເວລາ 01 ວັນລັດຖະການນັບແຕ່ມື້ທີ່ມີການປ່ຽນແປງ.

**b)** ຫ້າມຮ້ານຄ້າສະມາຊິກເກັບຄ່າທຳນຽມເພີ່ມ ຫຼື ຈຳແນກລາຄາເມື່ອລູກຄ້າຊຳລະເງິນຄ່າສິນຄ້າ, ບໍລິການຜ່ານ QR Code. ພ້ອມກັນນັ້ນ, ຮ້ານຄ້າສະມາຊິກ ຈະຕ້ອງເຜີຍແຜ່ກ່ຽວກັບການບໍ່ຈຳແນກລາຄາ ຫຼື ເກັບເງິນເພີ່ມ, ເກັບຄ່າທຳນຽມເພີ່ມ ສຳລັບບັນດາທຸລະກຳຊຳລະຄ່າສິນຄ້າ, ບໍລິການດ້ວຍບັດທຽບກັບການຊຳລະດ້ວຍເງິນສົດ. ຮ້ານຄ້າສະມາຊິກຈະຕ້ອງສົ່ງຄືນຈຳນວນເງິນສ່ວນຕ່າງ, ຄ່າທຳນຽມທີ່ໄດ້ເກັບຜິດກັບລະບຽບໃຫ້ກັບລູກຄ້າ ຫຼື ຜ່ານທາງອົງການຈັດຕັ້ງບັດສາກົນ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ເພື່ອສົ່ງຄືນຈຳນວນເງິນດັ່ງກ່າວ.

**c)** ຮັບຜິດຊອບກ່ຽວກັບຄວາມສ່ຽງ ແລະ ຄວາມເສຍຫາຍ ໃນກໍລະນີທີ່ທຸລະກຳຖືກປອມແປງລູກຄ້າປະຕິເສດການເຮັດທຸລະກຳ ແລະ/ຫຼື ຮ້ານຄ້າສະມາຊິກ ປະຕິບັດບໍ່ຖືກຕ້ອງຕາມການສະເໜີ, ຄຳແນະນຳຂອງ ຊາຄອມແບັງ ລາວ ຈົນກໍ່ໃຫ້ເກີດຄວາມເສຍຫາຍ.

**d)** ຈະຕ້ອງຈ່າຍເງິນຄືນບ້ວງທີ່ ຊາຄອມແບັງ ລາວ ໄດ້ຊຳລະໃຫ້ລ່ວງໜ້າຕາມທີ່ໄດ້ຕົກລົງກັນເມື່ອ ຊາຄອມແບັງ ລາວ ສະເໜີ.

**e)** ຮັບຜິດຊອບແກ້ໄຂບັນຫາໂດຍກົງກັບລູກຄ້າສຳລັບຂໍ້ຂັດແຍ່ງທັງໝົດ, ຮຽກຮ້ອງກ່ຽວກັບພັນທະການສົ່ງສິນຄ້າ ແລະ ຄຸນະພາບສິນຄ້າ/ບໍລິການທີ່ຮ້ານຄ້າສະມາຊິກໄດ້ສະໜອງໃຫ້ຕາມລະບຽບໃນມາດຕາທີ 13 - ຄວາມຮັບຜິດຊອບໃນການແກ້ໄຂຄຳຮຽກຮ້ອງ.

**f)** ຮ້ານຄ້າສະມາຊິກຕ້ອງປະສານງານກັບ ຊາຄອມແບັງ ລາວ, ອົງກອນອອກບັດ, ອົງກອນນຳໃຊ້ບັດຮ່ວມກັນ, ຕົວແທນອີເລັກໂທຣນິກເພື່ອເຮັດທຸລະກຳບັດ, ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ, ບັນດາອົງການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການປ້ອງກັນ ແລະ ຕ້ານການອາດຊະຍາກຳທີ່ກ່ຽວຂ້ອງເຖິງທຸລະກຳບັດ ແລະ ກະເປົາອີເລັກໂທຣນິກ.

**g)** ຮ້ານຄ້າສະມາຊິກຕ້ອງປະຕິບັດຕາມມາດຕະການຢ່າງຄົບຖ້ວນ, ຂັ້ນຕອນດ້ານເຕັກນິກວິຊາການ ແລະ ຮັກສາຂໍ້ມູນຂອງລູກຄ້າເປັນຄວາມລັບ, ຖ້າກວດພົບການສໍ້ໂກງ ແລະ ການປອມແປງໃນທຸລະກຳຊຳລະທີ່ ຊາຄອມແບັງ ລາວ ໄດ້ແນະນຳ ແລະ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທັງໝົດຖ້າຮ້ານຄ້າສະມາຊິກບໍ່ປະຕິບັດຕາມກົດລະບຽບຂອງ ຊາຄອມແບັງ ລາວ.

**h)** ຮ້ານຄ້າສະມາຊິກຕ້ອງຮັບປະກັນວ່າເງິນທຸກບ້ວງທີ່ຊຳລະໃຫ້ລ່ວງໜ້າ/ຊຳລະໂດຍ ຊາຄອມແບັງ ລາວ ໃຫ້ແກ່ ຮ້ານຄ້າສະມາຊິກແມ່ນອີງໃສ່ທຸກທຸລະກຳທີ່ຖືກຕ້ອງ ແລະ ຖືກຕາມລະບຽບກົດໝາຍ.

**i)** ຮ້ານຄ້າສະມາຊິກສາມາດນຳໃຊ້ສັນຍາລັກ, ຊື່ເຄື່ອງໝາຍການຄ້າ ຫຼື ຊັບສິນທາງປັນຍາອື່ນໆຂອງ ຊາຄອມແບັງ ລາວ ໄດ້ກໍ່ຕໍ່ເມື່ອໄດ້ຮັບການອະນຸຍາດເປັນລາຍລັກອັກສອນຈາກຊາຄອມແບັງ ລາວ.

**j)** ຈ່າຍຄ່າທຳນຽມທັງຫມົດຄົບຖ້ວນ ແລະ ທັນເວລາຕາມລະບຽບການ.

**k)** ບັນດາພັນທະອື່ນໆຕາມລະບຽບກົດໝາຍ.

## 6. ການຊຳລະລ່ວງຫນ້າ

**6.1.** ຈຳນວນເງິນທີ່ ຊາຄອມແບັງ ລາວ ຊຳລະລ່ວງໜ້າໃຫ້ແກ່ຮ້ານຄ້າສະມາຊິກເທົ່າຈຳນວນເງິນທີ່ລູກຄ້າໄດ້ນຳໃຊ້ເພື່ອຊຳລະຄ່າສິນຄ້າ, ບໍລິການ.

**6.2.** ຊາຄອມແບັງ ລາວ ຈະຊຳລະລ່ວງໜ້າໃຫ້ຮ້ານຄ້າສະມາຊິກເປັນເງິນກີບເທົ່ານັ້ນ. ຖ້າທຸລະກຳຊຳລະເປັນເງິນຕາຕ່າງປະເທດ, ຊາຄອມແບັງ ລາວ ຈະຊຳລະລ່ວງໜ້າໃຫ້ເປັນເງິນກີບອີງຕາມອັດຕາຊື້ເງິນໂອນຂອງເງິນຕາຕ່າງປະເທດທີ່ສອດຄ່ອງກັບອັດຕາທີ່ ຊາຄອມແບັງ ລາວ ປະກາດໃຊ້ຄັ້ງທຳອິດ.

**6.3.** ໄລຍະເວລາຊຳລະລ່ວງໜ້າ: ຊາຄອມແບັງ ລາວ ຈະຊຳລະລ່ວງໜ້າສຳລັບທຸລະກຳທີ່ເກີດຂຶ້ນພາຍໃນ 01 ວັນລັດຖະການ ແລະ 03 ວັນລັດຖະການສຳລັບທຸລະກຳຊຳລະຜ່ານກະເປົາອີເລັກໂທຣນິກ ນັບແຕ່ວັນທີ່ທຸລະກຳໄດ້ສຳເລັດ. ໃນກໍລະນີ ຖ້າໄລຍະເວລາການຊຳລະລ່ວງໜ້າບໍ່ຖືກວັນເຮັດວຽກຂອງ ຊາຄອມແບັງ ລາວ ແມ່ນຈະຖືກຍ້າຍໄປເປັນວັນເຮັດວຽກຕໍ່ໄປຂອງ ຊາຄອມແບັງ ລາວ.

## 7. ການສົ່ງເງິນຄືນ

**7.1.** ຊາຄອມແບັງ ລາວ ມີສິດທີ່ຈະປະຕິເສດການຊຳລະລ່ວງໜ້າ ແລະ/ຫຼື ເກັບຄືນສ່ວນໜຶ່ງ ຫຼື ທັງໝົດຂອງມູນຄ່າທຸລະກຳທີ່ໄດ້ຊຳລະລ່ວງໜ້າໃຫ້ແກ່ຮ້ານຄ້າສະມາຊິກ. ໄລຍະເວລາໃນການເລື່ອນການຊຳລະແມ່ນຕາມລະ ບຽບຂອງ ຊາຄອມແບັງ ລາວ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ/ຫຼື ຂໍ້ກຳນົດ ແລະ ການປະຕິບັດຂອງອົງການຊຳລະບັດສາກົນ ແລະ ອົງກອນສະໜອງບໍລິການກະເປົອີເລັກໂທຣນິກ, ສູງສຸດ 60 ວັນນັບຈາກວັນທີ່ເຮັດທຸລະກຳ.

ລວມມີແຕ່ບໍ່ຈຳກັດຕໍ່ກັບກໍລະນີດັ່ງຕໍ່ໄປນີ້:

**a)** ທຸລະກຳສໍ້ໂກງ, ປອມແປງ ຫຼື ຖືກລູກຄ້າຮຽກຮ້ອງວ່າເປັນການສໍ້ໂກງ ຫຼື ປອມແປງ.

**b)** ທຸລະກຳທີ່ ຊາຄອມແບັງ ລາວ ໄດ້ຊຳລະລ່ວງໜ້າໃຫ້ແກ່ຮ້ານຄ້າສະມາຊິກແຕ່ຖືກອົງກອນອອກບັດ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ປະຕິເສດບໍ່ຊຳລະໃຫ້ ຊາຄອມແບັງ ລາວ.

**c)** ຮ້ານຄ້າສະມາຊິກຮຽກຮ້ອງໃຫ້ຊຳລະເງິນໃຫ້ແກ່ບໍລິການທີ່ສະໜອງ ຫຼື ປະຕິບັດໂດຍຝ່າຍທີສາມທີ່ບໍ່ແມ່ນຮ້ານຄ້າສະມາຊິກ.

**d)** ຮ້ານຄ້າສະມາຊິກບໍ່ສະໜອງຂໍ້ມູນໃຫ້ ຊາຄອມແບັງ ລາວ ຕາມຂໍ້ຕົກລົງ. ເມື່ອເກີດຂໍ້ຂັດແຍ່ງລະຫວ່າງ ຮ້ານຄ້າສະມາຊິກ ແລະ ລູກຄ້າກ່ຽວກັບທຸລະກຳ.

**e)** ອົງກອນອອກບັດ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກຮຽກຮ້ອງ ແລະ ບໍ່ຍອມຊຳລະໃຫ້ແກ່ທຸລະກຳດັ່ງກ່າວ.

**f)** ການສະໜອງສິນຄ້າ/ບໍລິການ ລະຫວ່າງ ຮ້ານຄ້າສະມາຊິກ ແລະ ລູກຄ້າ, ການນຳໃຊ້ບັດ, ກະເປົາອີເລັກໂທຣນິກ ແລະ/ຫຼື ການປະຕິບັດພັນທະສະໜອງສິນຄ້າ/ບໍລິການ ຂອງແຕ່ລະຝ່າຍ ກ່ຽວຂ້ອງກັບການລະເມີດກົດໝາຍຂອງ ສປປ ລາວ.

**g)** ຮ້ານຄ້າສະມາຊິກ ລະເມີດຂໍ້ກຳນົດໃນຂໍ້ຕົກລົງນີ້, ບໍ່ວ່າຈະດ້ວຍວິທີນີ້ ຫຼື ວິທີອື່ນທີ່ບໍ່ສອດຄ່ອງກັບຂໍ້ກຳນົດທີ່ລະບຸໃນຂໍ້ຕົກລົງສະບັບນີ້ກໍ່ຄືຂໍ້ກຳນົດອື່ນທີ່ເປັນລາຍລັກອັກສອນຂອງ ຊາຄອມແບັງ ລາວ (ຖ້າມີ).

**h)** ຊາຄອມແບັງ ລາວ ແຈ້ງມີຜິດເຂົ້າບັນຊີຂອງຮ້ານຄ້າສະມາຊິກ ຫຼື ຕາມການຮຽກຮ້ອງຂໍຍົກເລີກການແຈ້ງມີໂດຍອົງກອນທີ່ໃຫ້ບໍລິການການໂອນເງິນຍ້ອນອົງກອນນີ້ກວດພົບຂໍ້ຜິດພາດເມື່ອທຽບກັບຄຳສັ່ງຈ່າຍ.

**i)** ທຸລະກຳແຈ້ງມີຊ້ຳກັນ ແລະ/ຫຼື ຊາຄອມແບັງ ລາວ ບໍ່ສາມາດຮຽກເກັບເງິນຈາກອົງກອນອອກບັດ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ.

**7.2.** ຮ້ານຄ້າສະມາຊິກ ສັນຍາຈະຊຳລະໃຫ້ ຊາຄອມແບັງ ລາວ: ຈຳນວນເງິນທີ່ຮຽກສົ່ງຄືນທັງໝົດຕາມໃນກໍລະນີທີ່ໄດ້ລະບຸໄວ້ໃນມາດຕາ 7 ຂໍ້ 7.1 ຂອງຂໍ້ຕົກລົງສະບັບນີ້, ຄ່າທຳນຽມທີ່ອົງການບັດສາກົນ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ເກັບໃນກໍລະນີທີອັດຕາທຸລະກຳຖືກກວດສອບ ແລະ ຮຽກຮ້ອງຂອງຮ້ານຄ້າສະມາຊິກເກີນກຳນົດຂອງອົງການບັດສາກົນ, ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ ພ້ອມດ້ວຍບັນດາຄ່າທຳນຽມອື່ນໆທີ່ເກີດຂຶ້ນ (ຖ້າມີ).

ດັ່ງນັ້ນ, ຊາຄອມແບັງ ລາວ ມີສິດແຈ້ງໜີ້ຄືນໃໝ່ໃນບັນຊີຂອງຮ້ານຄ້າສະມາຊິກ ຫຼື ຫັກອອກຈາກບ້ວງຊຳລະລ່ວງໜ້າຄັ້ງຕໍ່ໄປຂອງຮ້ານຄ້າສະມາຊິກ ຫຼື ຮ້ານຄ້າສະມາຊິກເອົາເງິນສົດໃຫ້ ຊາຄອມແບັງ ລາວ ເພື່ອຊຳລະບ້ວງເງິນທັງໝົດທີ່ຕ້ອງສົ່ງຄືນນັ້ນ.

**7.3.** ສິດໃນການຮຽກສົ່ງເງິນຄືນຂອງ ຊາຄອມແບັງ ລາວ ສາມາດແກ່ຍາວອອກໄດ້ເຖິງວ່າທັງສອງຝ່າຍກຳລັງເຈລະຈາເພື່ອແກ້ໄຂຂໍ້ຂັດແຍ່ງ ຫຼື ຂໍ້ຕົກລົງຈະສິ້ນສຸດລົງກໍຕາມ.

## 8. ເກັບຄືນເງິນທີ່ຊຳລະລ່ວງໜ້າ

ເມື່ອເກີດມີກໍລະນີໃດໜຶ່ງທີ່ຮ້ານຄ້າສະມາຊິກຖືກປະຕິເສດການຊຳລະລ່ວງໜ້າໃນມາດຕາ 6 ການຊຳລະລ່ວງຫນ້າ, ຖ້າ ຊາຄອມແບັງ ລາວ ຍັງບໍ່ທັນຊຳລະລ່ວງໜ້າໃຫ້ຮ້ານຄ້າສະມາຊິກ, ຊາຄອມແບັງ ລາວ ມີສິດເລື່ອນການຊຳລະລ່ວງໜ້າຕາມຂໍ້ກຳນົດທີ່ລະບຸໃນຂໍ້ຕົກລົງສະບັບນີ້. ໄລຍະເວລາເລື່ອນການຊຳລະຕ້ອງປະຕິບັດຕາມຂໍ້ກຳນົດຂອງ ຊາຄອມແບັງ ລາວ ແລະ ສອດຄ່ອງກັບລະບຽບກົດໝາຍ ແລະ /ຫຼື ຂໍ້ກຳນົດຂອງອົງການບັດສາກົນ, ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ. ສູງສຸດ 60 ວັນ ນັບແຕ່ວັນທີ່ເຮັດທຸລະກຳ. ເມື່ອສິ້ນສຸດໄລຍະເວລາການເລື່ອນການຊຳລະ, ຖ້າທຸກຝ່າຍເຫັນວ່າການປະຕິເສດການຊຳລະເງິນລ່ວງ  ໜ້າແມ່ນຖືກຕ້ອງແລ້ວ, ຊາຄອມແບັງ ລາວ ຈະບໍ່ແຈ້ງມີຈຳນວນເງິນທີ່ຖືກປະຕິເສດການຊຳລະລ່ວງໜ້າເຂົ້າບັນຊີຂອງ ຮ້ານຄ້າສະມາຊິກ. ຖ້າ ຊາຄອມແບັງ ລາວ ໄດ້ຊຳລະລ່ວງໜ້າແລ້ວ, ຮ້ານຄ້າສະມາຊິກຕົກລົງເຫັນດີ ຊາຄອມແບັງ ລາວ ຈະເລືອກໜຶ່ງ ຫຼື ຫຼາຍວິທີຕໍ່ໄປນີ້ເພື່ອເກັບຄືນບ້ວງເງິນທີ່ໄດ້ຊຳລະລ່ວງໜ້າໃຫ້ຮ້ານຄ້າສະມາຊິກ. ສຳລັບບັນດາທຸລະກຳທີ່ຖືກປະຕິເສດ:

**8.1.** ຊາຄອມແບັງ ລາວ ຈະແຈ້ງໜີ້ຈຳນວນເງິນທີ່ຖືກປະຕິເສດການຊຳລະລ່ວງໜ້າເຂົ້າບັນຊີຊຳລະ ຫຼື ບັນຊີເງິນຝາກຂອງຮ້ານຄ້າສະມາຊິກທີ່ເປີດຢູ່ທີ່ ຊາຄອມແບັງ ລາວ ແລະ/ຫຼື;

**8.2.** ຊາຄອມແບັງ ລາວ ຈະຫັກຈຳນວນເງິນທີ່ຖືກປະຕິເສດການຊຳລະລ່ວງໜ້າເຂົ້າໃນງວດການຊຳລະຄັ້ງຕໍ່ໄປ ແລະ/ຫຼື;

**8.3.** ຊາຄອມແບັງ ລາວ ຈະສົ່ງແຈ້ງການຮຽກຮ້ອງໃຫ້ຮ້ານຄ້າສະມາຊິກສົ່ງຄືນຈຳນວນເງິນທີ່ຖືກປະຕິເສດຊຳລະດ້ວຍເງິນສົດ ພາຍໃນ 15 (ສິບຫ້າ) ວັນ ນັບແຕ່ວັນທີ່ ຊາຄອມແບັງ ລາວ ສົ່ງໜັງສືແຈ້ງການໃຫ້. ໃນກໍລະນີທີ່ຮ້ານຄ້າສະມາຊິກສົ່ງເງິນຄືນບໍ່ຖືກຕ້ອງຕາມກຳນົດຮ້ານຄ້າສະມາຊິກຈະຕ້ອງຈ່າຍອັດຕາດອກເບ້ຍເທົ່າກັບ 150% ຂອງອັດຕາດອກເບ້ຍຂັ້ນພື້ນຖານທີ່ ຊາຄອມແບັງ ລາວ ກຳນົດໃນແຕ່ລະໄລຍະທຽບກັບໄລຍະການຊຳລະຊ້າ.

## 9. ການເກັບຮັກສາ ແລະ ການສະໜອງໃບບິນ, ເອກະສານ

**9.1.** ຮ້ານຄ້າສະມາຊິກມີໜ້າທີ່ເກັບຮັກສາເອກະສານລວມມີແຕ່ບໍ່ຈຳກັດສະບັບແທ້/ສະບັບສຳເນົາໃບບິນ, ເອກະສານທີ່ກ່ຽວຂ້ອງກັບການຊື້ຂາຍ,ການສະໜອງສິນຄ້າ ແລະ ບໍລິການຕ່ຳສຸດ 60 ວັນ ແລະສະໜອງໃຫ້ຕາມການຮຽກຮ້ອງຂອງ ຊາຄອມແບັງ ລາວ ເພື່ອຮັບໃຊ້ເຂົ້າໃນການແກ້ໄຂຄຳຮຽກຮ້ອງ ແລະ ປະຕິເສດການຊຳລະຂອງລູກຄ້າ (ຖ້າມີ). ຊາຄອມແບັງ ລາວບໍ່ມີໜ້າທີ່ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂື້ນໃນກໍລະນີທີ່ຮ້ານຄ້າສະມາຊິກບໍ່ສະໜອງເອກະສານຕາມການຮຽກຮ້ອງຂອງ ຊາຄອມແບັງ ລາວ.

**9.2.** ໄລຍະເວລາໃນການສະໜອງເອກະສານຕາມການຮຽກຮ້ອງຈາກ ຊາຄອມແບັງ ລາວ ແມ່ນບໍ່ເກີນ 07 (ເຈັດ) ວັນລັດຖະການ ນັບແຕ່ວັນທີ່ຮ້ານຄ້າສະມາຊິກໄດ້ຮັບການຮຽກຮ້ອງຈາກ ຊາຄອມແບັງ ລາວ.

## 10. ບັນຊີຂອງຮ້ານຄ້າສະມາຊິກ

ແມ່ນບັນຊີທີ່ຮ້ານຄ້າສະມາຊິກໄດ້ຕົກລົງເຫັນດີລົງທະບຽນເປີດກັບ ຊາຄອມແບັງ ລາວ ເພື່ອ ຊາຄອມແບັງ ລາວ ຈະຊຳລະລ່ວງໜ້າບັນດາທຸລະກຳທີ່ເກີດຂຶ້ນຕາມຂໍ້ຕົກລົງ(ໃນຂໍ້ຕົກລົງສະບັບນີ້ເອີ້ນວ່າບັນຊີຊຳລະ).

## 11. ການຖ່າຍໂອນ

**11.1** ຮ້ານຄ້າສະມາຊິກ ສັນຍາວ່າຈະບໍ່ຖ່າຍໂອນ, ມອບສິດ ແລະ ພັນທະຂອງຮ້ານຄ້າສະມາຊິກພາຍໃຕ້ລະບຽບຂອງຂໍ້ຕົກລົງສະບັບນີ້ໃຫ້ກັບບຸກຄົນທີສາມ ໂດຍບໍ່ໄດ້ຮັບການອະນຸຍາດເປັນລາຍລັກອັກສອນຈາກ ຊາຄອມແບັງ ລາວ.

**11.2** ໃນກໍລະນີທີ່ຮ້ານຄ້າສະມາຊິກປ່ຽນຊື່ ຫຼື ປ່ຽນເຈົ້າຂອງ, ປ່ຽນຮູບແບບຕາມລະບຽບກົດໝາຍ, ຕ້ອງແຈ້ງໃຫ້ ຊາຄອມແບັງ ລາວ ຮັບຮູ້ເປັນລາຍລັກອັກສອນ ແລະ ທຸກໆສິດ ແລະ ພັນທະຂອງຮ້ານຄ້າສະມາຊິກຕ້ອງສືບຕໍ່ດຳເນີນການໂດຍອົງກອນ ຫຼື ບຸກຄົນທີ່ສືບທອດຕໍ່.

## 12. ກໍລະນີທີ່ໄດ້ຮັບການຍົກເວັ້ນຄວາມຮັບຜິດຊອບ

**12.1** ນອກຈາກພັນທະທີ່ໄດ້ລະບຸໄວ້ໃນມາດຕາ 5.2 ຂອງຂໍ້ຕົກລົງສະບັບນີ້, ຊາຄອມແບັງ ລາວ ຈະໄດ້ຮັບການຍົກເວັ້ນຄວາມຮັບຜິດຊອບຈາກກໍລະນີດັ່ງຕໍ່ໄປນີ້:

**12.2** ການຮ້ອງຟ້ອງ, ການສູນເສຍ, ຄ່າໃຊ້ຈ່າຍ ແລະ ຄວາມເສຍຫາຍທີ່ເກີດຈາກການລ່າຊ້າ ຫຼື ບໍ່ໄດ້ເຮັດການ ບໍລິການຊຳລະ Online ທີ່ໄດ້ສະໜອງຕາມເນື້ອໃນຂໍ້ຕົກລົງສະບັບນີ້.

**12.3** ຄວາມເສຍຫາຍທີ່ເກີດຂຶ້ນເນື່ອງຈາກຮ້ານຄ້າສະມາຊິກບໍ່ສາມາດສະໜອງ ແລະ ນຳໃຊ້ບໍລິການ Sacombank QR Pay ໄດ້ຍ້ອນ:

**a)** ບໍ່ສາມາດເຂົ້າເຖິງ ຫຼື ປະສານງານກັບຜູ້ສະໜອງການບໍລິການ, ເຄືອຂ່າຍ, ຜູ້ໃຊ້ບໍລິການ ຫຼື ບັນດາແຫຼ່ງຂໍ້ມູນຜ່ານທາງອິນເຕີເນັດ; ຫຼື

**b)** ຄວາມຜິດພາດຂອງຮາດແວ ຫຼື ຊອບແວ ທີ່ເກີນການຄວບຄຸມຂອງ ຊາຄອມແບັງ ລາວ; ຫຼື

**c)** ຄວາມເສຍຫາຍເນື່ອງຈາກການຂັດຂ້ອງທາງອິນເຕີເນັດ, ຂັດຂ້ອງຂອງອຸປະກອນ ຫຼື ຂັດຂ້ອງໃນເວລາທີ່ມີການບຳລຸງຮັກສາລະບົບ; ຫຼື

**d)** ຂໍ້ຂັດຂ້ອງທີ່ບໍ່ໄດ້ເກີດຈາກ ຊາຄອມແບັງ ລາວ.

**12.4** ຄວາມເສຍຫາຍທາງກົງ, ທາງອ້ອມ, ຜົນກະທົບ ຫຼື ຄວາມເສຍຫາຍທີ່ກົດໝາຍກຳນົດສຳລັບຮ້ານຄ້າສະມາຊິກ ເຖິງແມ່ນວ່າຈະແຈ້ງໃຫ້ຊາບກ່ຽວກັບຄວາມເສຍຫາຍທີ່ເກີດຂຶ້ນ, ລວມມີແຕ່ບໍ່ຈຳກັດ:

**a)** ຄວາມເສຍຫາຍກ່ຽວກັບລາຍຮັບ, ກຳໄລຂອງຫົວໜ່ວຍທຸລະກິດ; ຫຼື

**b)** ສາຍພົວພັນທີ່ບໍ່ດີກັບລູກຄ້າ; ຫຼື

**c)** ຄ່າໃຊ້ຈ່າຍສຳລັບການທົດແທນສິນຄ້າ ຫຼື ບໍລິການ, ຄ່າຂົນສົ່ງສິນຄ້າລ່າຊ້າ, ຄ່າໃຊ້ຈ່າຍຍ້ອນເອກະສານເສຍຫາຍ ຫຼື ຂໍ້ຂັດແຍ່ງໃດໆທີ່ກ່ຽວຂ້ອງກັບການລະເມີດເງື່ອນໄຂຂອງຂໍ້ຕົກລົງຊື້ຂາຍ ແລະ ສະໜອງການບໍລິການ ລະຫວ່າງ ຮ້ານຄ້າສະມາຊິກ ແລະ ລູກຄ້າ; ຫຼື

**d)** ທຸກໆຄວາມຮັບຜິດຊອບຂອງຮ້ານຄ້າສະມາຊິກຕໍ່ກັບບຸກຄົນທີສາມທີ່ເກີດຂຶ້ນກ່ຽວຂ້ອງກັບການສູນເສຍຂໍ້ມູນ, ເສຍ ຫຼື ເປ່ເພຂອງຮາດແວ ຫຼື ຊອບແວ, ຄວາມເສຍຫາຍທີ່ເກີດຈາກການທີ່ບໍ່ສາມາດເຂົ້າເຖິງເຄືອຂ່າຍ, ຄວາມເສຍຫາຍທີ່ເກີດຈາກຄອມພິວເຕີຕິດໄວຣັສ, ຄວາມເສຍຫາຍເກີດຈາກຄວາມຮັບຜິດຊອບທີ່ບໍ່ສາມາດສົ່ງຕໍ່ຂໍ້ມູນ; ຫຼື

**12.5.** ບໍລິການ Sacombank QR Pay ລວມມີ ການສົ່ງຂໍ້ມູນຜ່ານລະບົບທີ່ບໍ່ແມ່ນຂອງຊາຄອມແບັງ ລາວ, ລວມທັງການບໍລິການຂອງລັດ ແລະ ເອກະຊົນ. ການນຳໃຊ້ລະບົບອື່ນເພື່ອສົ່ງຂໍ້ມູນໄດ້ຮັບການອະນຸມັດຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາລະບຽບການທີ່ນຳໃຊ້ກັບລະບົບເຫຼົ່ານັ້ນ. ຊາຄອມແບັງ ລາວ ຈະບໍ່ຮັບຜິດຊອບຕໍ່ການຂໍນຳໃຊ້ ຫຼື ລະເມີດກົດລະບຽບດັ່ງກ່າວ.

**12.6.** ຮ້ານຄ້າສະມາຊິກ ເຮັດທຸລະກຳກັບກຸ່ມລູກຄ້າທີ່ບໍ່ໄດ້ລະບຸໃນຂໍ້ຕົກລົງສະບັບນີ້.

## 13. ການແກ້ໄຂຂໍ້ຂັດແຍ່ງ

**13.1. ຮ້ານຄ້າສະມາຊິກ:**

**a)** ຮັບຜິດຊອບໃນການແກ້ໄຂຂໍ້ຂັດແຍ້ງທັງໝົດໂດຍກົງກັບລູກຄ້າ, ຄຳຮຽກຮ້ອງກ່ຽວກັບພັນທະທີ່ກ່ຽວຂ້ອງກັບການຊື້ຂາຍ, ຄຸນນະພາບຂອງສິນຄ້າ, ພັນທະໃນການສະໜອງສິນຄ້າ/ບໍລິການທີ່ຊຳລະດ້ວຍບັດ, ກະເປົາອີເລັກໂທຣນິກທີ່ຮ້ານຄ້າສະມາຊິກເປັນຜູ້ສະໜອງ.

**b)** ຍອມຮັບຕໍ່ຄວາມສ່ຽງເທົ່າຄ່າໃຊ້ຈ່າຍຂອງຕົນ, ມີໜ້າທີ່ຮັບຜິດຊອບສະໜອງຫຼັກຖານ, ເອກະສານທາງດ້ານກົດໝາຍເພື່ອຢັ້ງຢືນວ່າໄດ້ເຮັດທຸລະກຳກັບລູກຄ້າຕາມການຮຽກຮ້ອງຂອງ ຊາຄອມແບັງ ລາວ.

**13.2. ຊາຄອມແບັງ ລາວ:**

ດ້ວຍມາດຕະການດ້ານວິຊາຊີບຈະຊ່ວຍເຫຼືອຮ້ານຄ້າສະມາຊິກໃນການກວດສອບ ແລະ ແກ້ໄຂຄຳຮຽກຮ້ອງ. ຊາຄອມແບັງ ລາວ ບໍ່ມີຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ, ຄວາມເສຍຫາຍທີ່ເກີດຈາກທຸລະກຳທີ່ຖືກຮຽກຮ້ອງ ແລະ ຖືກປະຕິເສດການຊຳລະສຳລັບຮ້ານຄ້າສະມາຊິກ ຫຼື ຝ່າຍທີສາມອື່ນ.

## 14. ການໂຄສະນາ ແລະ ເຜີຍແຜ່

**14.1.** ຊາຄອມແບັງ ລາວ ຈະສະໜອງປ້າຍ, ສະຕິກເກີ້ບັດ/ກະເປົາອີເລັກໂທຣນິກທີ່ສາມາດນຳໃຊ້ໄດ້ໃຫ້ຮ້ານຄ້າສະມາຊິກ ແລະ ເອກະສານໂຄສະນາອື່ນໆທີ່ໄດ້ລະບຸໃນຂໍ້ຕົກລົງ ຫຼື ຮູບແບບອື່ນເປັນລາຍລັກອັກສອນໃນແຕ່ລະໄລຍະ.

**14.2.** ຮ້ານຄ້າສະມາຊິກຕ້ອງຕິດສະຕິກເກີ້ບັດທີ່ສາມາດນຳໃຊ້ໄດ້, ລວມເຖິງອຸປະກອນການໂຄສະນາອື່ນໆທີ່ ຊາຄອມແບັງ ລາວ ສະໜອງໃຫ້ໃນຮ້ານຂອງຕົນ.

**14.3.** ຮ້ານຄ້າສະມາຊິກບໍ່ມີສິດນຳໃຊ້ອຸປະກອນໂຄສະນາທີ່ກ່ຽວຂ້ອງກັບ ຊາຄອມແບັງ ລາວ ຫຼື ອົງກອນອອກບັດ/ອົງກອນສະໜອງບໍລິການກະເປົາອີເລັກໂທຣນິກ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ ຊາຄອມແບັງ ລາວ. ຮ້ານຄ້າສະມາຊິກບໍ່ສາມາດໃຊ້ຊື່, ສັນຍາລັກ (logo), ເຄື່ອງໝາຍການຄ້າ ຫຼື ລິຂະສິດຂອງ ຊາຄອມແບັງ ລາວ ໂດຍທີ່ບໍ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກ ຊາຄອມແບັງ ລາວ.

**14.4.** ຮ້ານຄ້າສະມາຊິກອະນຸຍາດໃຫ້ ຊາຄອມແບັງ ລາວ ໂຄສະນາຊື່, ທີ່ຢູ່, ເບີໂທລະສັບ, ເບີແຟັກ ແລະ ອີເມວຂອງ ຮ້ານຄ້າສະມາຊິກ ແລະ ສາມາດນຳໃຊ້ສັນຍາລັກຂອງຮ້ານຄ້າສະມາຊິກໃນຈົດໝາຍ, ໜັງສືແຈ້ງການ ຫຼື ໜັງສືພິມຂອງ ຊາຄອມແບັງ ລາວ.

## 15. ການປັບປຸງ,  ເພີ່ມເຕີມ ເງື່ອນໄຂ ແລະ ຂໍ້ກຳນົດ

**15.1.** ຮ້ານຄ້າສະມາຊິກເຫັນດີໃຫ້ ຊາຄອມແບັງ ລາວ ມີສິດທີ່ຈະປັບປຸງ, ເພີ່ມເຕີມເງື່ອນໄຂ ແລະ ຂໍ້ກຳນົດໃນຂໍ້ຕົກລົງສະບັບນີ້ ແລະ ແຈ້ງໃຫ້ຮ້ານຄ້າສະມາຊິກຮູ້ກ່ອນທີ່ຈະປະຕິບັດໃນເວລາທີ່ເໝາະສົມ.
ໃນກໍລະນີມີການປັບປຸງ ແລະ ເພີ່ມເຕີມເນື້ອໃນໃດໆທີ່ລະບຸໄວ້ໃນ

**15.2.** ເອກະສານແນະນຳ, ຊາຄອມແບັງ ລາວ ຈະແຈ້ງການໃຫ້ຮ້ານຄ້າສະມາຊິກຮັບຮູ້ກ່ອນ 15 (ສິບຫ້າ) ວັນ ກ່ອນທີ່ເນື້ອໃນຈະມີການປັບປຸງ, ເພີ່ມເຕີມ ແລະ ນຳໃຊ້ຢ່າງເປັນທາງການ ຫຼື ອາດຈະໄວກວ່ານັ້ນອີງຕາມລະບຽບຂອງອົງການຈັດຕັ້ງທີ່ມີສິດ. ການທີ່ຮ້ານຄ້າສະມາຊິກສືບຕໍ່ໃຊ້ບໍລິການຫຼັງຈາກທີ່ມີການປະກາດໃຊ້ຕາມແຈ້ງການຂ້າງເທິງສະແດງວ່າຮ້ານຄ້າສະມາຊິກເຫັນດີກັບການປັບປຸງ, ເພີ່ມເຕີມເນື້ອໃນດັ່ງກ່າວ.

## 16. ການຍົກເລີກການໃຊ້ບໍລິການຂອງຮ້ານຄ້າສະມາຊິກ

ຮ້ານຄ້າສະມາຊິກ ສາມາດຂໍຍົກເລີກດ້ວຍຄວາມສະໝັກໃຈ ແລະ ຕ້ອງປະກອບເອກະສານຂໍຍົກເລີກແຈ້ງມາຊາຄອມແບັງ ລາວ ເພື່ອປະຕິບັດຕາມຂັ້ນຕອນການຍົກເລີກພາຍໃນກຳນົດໄລຍະເວລາ 3 ວັນລັດຖະການ.
ໃນກໍລະນີທີ່ມີຄຳສັ່ງຂອງອົງການທີ່ມີສິດອຳນາດຕາມກົດໝາຍ ຫຼື ຊາຄອມແບັງ ລາວ ກວດພົບເຫັນວ່າການນຳໃຊ້ມີລັກສະນະບໍ່ຖືກຕ້ອງຕໍ່ລະບຽບຂອງ ຊາຄອມແບັງ ລາວ ຫຼື ລະບຽບກົດໝາຍ
ຊາຄອມແບັງ ລາວ ມີສິດຢຸດໃຫ້ບໍລິການຊົ່ວຄາວ ຫຼື ຍົກເລີກການນຳໃຊ້, ຮ້ານຄ້າສະມາຊິກບໍ່ມີສິດຮຽກຮ້ອງຄ່າເສຍຫາຍໃດໆຈາກ ຊາຄອມແບັງ ລາວ ແລະ ຫາກ ຊາຄອມແບັງ ລາວ ຫຼື ບຸກຄົນໃດໆໄດ້ຮັບຄວາມເສຍຫາຍອັນເກີດມາຈາກຮ້ານຄ້າສະມາຊິກບໍ່ປະຕິບັດຕາມຂໍ້ຕົກລົງ ແລະ ເງື່ອນໄຂຂອງການໃຊ້ບໍລິການ ຫຼື ຮ້ານຄ້າສະມາຊິກໃຊ້ບັນຊີເງິນຝາກ ຫຼື ບໍລິການໃນທຸລະກຳທີ່ເປັນການສໍ້ໂກງ ຫຼື ທຸຈະລິດ ຮ້ານຄ້າສະມາຊິກຕ້ອງໄດ້ຊົດໃຊ້ຄ່າເສຍຫາຍໃຫ້ແກ່ ທະນາຄານ ຫຼື ບຸກຄົນທີ່ໄດ້ຮັບຄວາມເສຍຫາຍຢ່າງຄົບຖ້ວນ.

## 17. ຄຳສັນຍາຂອງແຕ່ລະຝ່າຍ

**17.1.** ທັງສອງຝ່າຍໄດ້ສັນຍາວ່າຈະປະຕິບັດຕາມພັນທະທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້. ຖ້າຝ່າຍໃດຝ່າຍໜຶ່ງລະ ເມີດ ແລະ ເຮັດໃຫ້ເກີດຄວາມເສຍຫາຍແກ່ອີກຝ່າຍ, ຝ່າຍທີ່ລະເມີດຈະຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທັງໝົດ. ລວມມີແຕ່ບໍ່ຈຳກັດຄ່າໃຊ້ຈ່າຍ, ຄ່າເສຍຫາຍ ແລະ

**17.2.** ຄ່າໃຊ້ຈ່າຍໃນການຮ້ອງຟ້ອງ ແລະ ຄ່າຈ້າງທະນາຍຄວາມ.
ແຕ່ລະຝ່າຍໄດ້ຢືນຢັນ ແລະ ສັນຍາວ່າຜູ້ຕາງໜ້າທີ່ລົງລາຍເຊັນຂ້າງລຸ່ມນີ້ມີສິດອຳນາດພຽງພໍ, ລາຍເຊັນຂອງຜູ້ຕາງຫນ້າໃນຂໍ້ຕົກລົງແມ່ນເປັນຫຼັກຖານວ່າຜູ້ຕາງໜ້າໄດ້ອ່ານ, ກວດສອບ, ສົມທຽບ ແລະ ເຂົ້າໃຈເນື້ອໃນ ແລະ ລະບຽບທັງໝົດທີ່ມີຢູ່ໃນຂໍ້ຕົກລົງສະບັບນີ້.